# ຍິນດີຕ້ອນຮັບກຸຫຼາບຂາວ

ໂດຍ: ບ່າວຫຼັກເຈັດ

ເຫັນອີເມລ໌ສົ່ງຈ້າວ     ເອື້ອຍຍິມກ່າວເປັນຄຳກອນ
ຫຼອນຕື່ມຄຳຜຍາ     ສົ່ງຜ່ານມາທາງນີ້
ສຸດນ້ອງດີໃຈລົ້ນ     ຊິມີຄືນມາຂຽນຕໍ່
ໃຊ້ຄຳກອນແທນຈໍມໍ  ພໍເປັນສາລແຕ່ງແຕ້ມ     ແຖມເຢີ້ຍຢອກກັນ

ຄືດັ່ງເອື້ອຍເວົ້ານັ້ນ     ກອນຂຽນຍາກເຫຼືອທີ
ຜູ່ທີ່ມີປັນຍາດີ     ຈຶ່ງແຕ່ງຂຽນກອນໄດ້
ແຕ່ວ່າ  ຖ້າມີໃຈຫມາຍຫມັ້ນ     ປະສານກັນກັບຟັກໄຜ່
ເລົ່າເຣື່ອງຄວາມໃນໃຈ  ໃສ່ຄຳເວົ້າໃຫ້ພັດພ້ອງ  ຮັບຮອງໄດ້ຄ່ອງຄື

ສ່ວນນ້ອງຂຽນທຸກມື້     ພໍໃຫ້ຈື່ຈຳບິດ
ຈິດໃສ່ໃນຝາມື     ບາງມື້ຄວາບໍ່ເຫັນເຈັ້ຽ
ຄຶດຄົວເຄິຽຍາມໃດໄດ້     ຂຽນລົງໄປຍ້ານບໍ່ຈື່
ຄວາມຊົງຈຳ  ມັນສັ້ນເຂົ້າທຸກມື້     ສມອງຕື້ຍ້ານແຕ່ລືມ

ບາງມື້ເປັນອື້ມຄື້ມ     ມັນມືດຕຶບຕັນສມອງ
ລອງຈັບບິກມາຂຽນ     ບໍ່ຫຼ່ຽນໄຫຼໄຂທ້າງ
ເລີຍກາຍເປັນກອນຮ້າງ     ພອຍຫມຶງຫມັງ  ພັງຜິກ
ຈີກເຈັ້ຽເປັນຂີ້ເຫຍື້ອ     ເຫຼືອໃຈຕື້ນຕີບຕັນ

ສ່ວນຄຳກອນເອື້ອຍນັ້ນ    ອ່ານແລ້ວມ່ວນນວນຫູ    ຢູ່ເດີ
ພໍຖູໄຖໄປມາ    ຊ້ອນເຊື່ອງຫາສຳພັດໄວ້
ມີຄວາມຫມາຍເຖິງຖອງຖ້ວນ    ບໍຣະບວນຄັກແນ່
ຍົກໂປ້ໃຫ້ເອື້ອຍແທ້    ມາແວເວົ້າກ່າວກອນ    ກັນເດີ

ເອື້ອຍຍິມມະລາເອີຍ!    ເຈົ້າຜູ່ພົ້ວດອກຊ້ອນ    ທີ່ຊອນກິ່ນຢູ່ເມືອງຫນາວ
ກຸຫຼາບຂາວນັ້ນຄືນາມ    ຊ່າງງົດງາມເຫມາະສົມເຈົ້າ
ສຽງຫມູ່ຊົມແຊວເວົ້າ    ທັງຫວັງເອົາເປັນຕົວຢ່າງ    ຈິງໃດ
ຄຸນຄວາມດີ    ນັ້ນຄືສິ່ງເອກອ້າງ    ຊົມເຊີຍຍ້ອງອອກຈາກໃຈ    ເອື້ອຍເອີຍ

ກຸຫຼາບຂາວເປັນດອກໄມ້    ທີ່ສົ່ງກິ່ນຫອມຫວນ    ຈິງແລ້ວ
ກີບທີ່ຂາວໃສນວນ    ຈົ່ງສງວນເທີດທູນໄວ້
ຢ່າໃຫ້ສີຫມອງເສົ້າ    ຫຼືອັບເສົາເຫຼືອງຫຼ່າ    ເດີອາຈານເດີ
ກຸຫຼາບຂາວຍິມມະລາ    ອີກສອງປີຂ້າງຫນ້າ    ນ້ອງມາພໍ້ເຈົ້າແນ່ນອນ....